# ຮູບແບບການປູກໄມ້ຢາງບົງໃສ່ພື້ນທີ່ສວນກ້ວຍຂອງປະຊາຊົນ ບ້ານ ເຟືອງ,ເມືອງ ເຊໂປນ,ແຂວງ ສະຫັວນນະເຂດ

# The Pattern of *Persea Kurzilkosterm* Planting Mixed in *Banana* Plantation Areas of the People in Feuang Village, Xepone District, Savannakhet Province


ໂດຍ:

ທ ດາໄລກີ ພະທິທັກ

ທ ລັດຖະກອນ ດວງພະຈັນ

ທ ສຸວິນ ແກ້ວມູນໂຮມ

# ບົດຄັດຫຍໍ້

ການລົງເກັບກໍາຂໍ້ມູນ ກ່ຽວກັບຮູບແບບການປູກໄມ້ຢາງບົງໃສ່ພື້ນທີ່ສວນກວ້ຍຂອງປະຊາຊົນບ້ານເຟືອງ,ເມືອງເຊໂປນ,ແຂວງສະຫັວນນະເຂດໃນຄັ້ງນີ້ໄດ້ທໍາການສໍາພາດ ຄັດເລືອກເອົາຄອບຄົວທີ່ປູກໄມ້ເດັ່ນກວ່າໝູ່ໃນບ້ານມີ 3 ຄອບຄົວເພື່ອເປັນຕົວແບບຂອງບ້ານ.

ການສຶກສາຄັ້ງນີ້ແມ່ນໄດ້ສຶກສາກ່ຽວກັບລັກສະນະການປູກ,ການບົວລະບັດຮັກສາ,ຕົ້ນທຶນການຕະຫຼາດ-ເສດຖະກິດຂອງຜະລິດຕະພັນແຕ່ລະຄອບຄົວ.

ຈຸດປະສົງແມ່ນໄດ້ສຶກສາຮູບແບບການນໍາໃຊ້ທີ່ດິນ-ເຕັກນິກວິທີການປູກໄມ້ຢາງບົງໃສ່ພື້ນທີ່ສວນກ້ວຍ ແລະ ການຕະຫຼາດ-ເສດຖະກິດຂອງຜະລິດຕະພັນ ເພື່ອຢາກເຜີຍແຜ່ການນໍາໃຊ້ທີ່ດິນ ແບບຄົງທີ່.ວິທີການສຶກສາແມ່ນໄດ້ສໍາພາດກັບປະຊາຊົນ ແລະ ໄດ້ສຶກສາຄົ້ນຄ້ວາຕາມເອກະສານ ຕ່າງໆແລ້ວລວບລວມເປັນຂໍ້ມູນໃນການຂຽນບົດລາຍງານຈົບຊັ້ນນີ້.

ຜົນໄດ້ຮັບຈາກການສຶກສາສາມາດເກັບກໍາໄດ້ດັ່ງນີ້ ຊະນິດພືດປະຊາຊົນນໍາມາປູກແບບປະ ສົມປະສານ,ຮູ້ວິທີການນໍາໃຊ້ເຕັກນິກວິຊາການ ກະສິກໍາ-ປ່າໄມ້,ການໃຊ້ແຮງງານຄອບຄົວໃນການຜະລິດທີ່ເປັນການປະຫຍັດລາຍຈ່າຍຂອງຄອບຄົວທີ່ດີ.

---------------------------